ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ເລກທີ 770 /ສທ

ນະຄອນຫລວງວຽງຈັນ, ວັນທີ 06 APR 2022

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງ ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ ສະບັບເລກທີ 570/ນຍ, ລົງວັນທີ 16 ກັນຍາ 2021;
- ອີງຕາມ ຄຳສັ່ງ ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ສະບັບເລກທີ 190/ຄລສພ, ລົງວັນທີ 29 ກັນຍາ 2021;
- ອີງຕາມ ແຈ້ງການຂອງກະຊວງພາຍໃນ ສະບັບເລກທີ 175/ພນ, ລົງວັນທີ 24 ກັນຍາ 2021;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ເລກທີ 1125/ກພງ, ລົງວັນທີ 5 ເມສາ 2022.

## ລັດຖະມົນຕີ ກະຊວງສາທາລະນະສຸກ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງທາງດ້ານນິຕິກຳໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ແນໃສ່ຈັດຕັ້ງປະຕິບັດວຽກງານສາທາລະນະສຸກ ພາຍໃນແຂວງ, ນະຄອນຫຼວງ ໃຫ້ມີຄຸນນະພາບ, ປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ຊື່ພາສາອັງກິດ: Provincial Health Office ຊື່ພາສາຝຣັ່ງ: Service de la sante Provinciale ແມ່ນໂຄງປະກອບກົງຈັກໜຶ່ງຂອງອົງການປົກຄອງແຂວງ, ນະຄອນຫຼວງ ຢູ່ພາຍໃຕ້ການຊີ້ນຳ ແລະ ຄຸ້ມຄອງດ້ານຊີວິດ ການເມືອງຂອງອົງການປົກຄອງແຂວງ, ນະຄອນຫຼວງ ແລະ ພາຍໃຕ້ການຊີ້ນຳ ແລະ ກວດກາດ້ານວິຊາການ ຂອງກະຊວງ ສາທາລະນະສຸກ, ມີບົດບາດເປັນເສນາທິການໃຫ້ແກ່ອົງການປົກຄອງແຂວງ, ນະຄອນຫຼວງ ແລະ ກະຊວງສາທາລະນະສຸກ ໃນການຄຸ້ມຄອງວຽກງານສາທາລະນະສຸກ ເປັນຕົ້ນ: ວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ, ວຽກງານກັນພະຍາດ ແລະ ຄວບຄຸມພະຍາດຕິດຕໍ່, ວຽກງານປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ວຽກງານປົກປ້ອງຜູ້ບໍລິໂພກອາຫານ, ຢາ ແລະ ຜະລິດຕະພັນການແພດ, ວຽກງານ ຄຸ້ມຄອງ,ພັດທະນາພະນັກງານ ແລະ ຄົ້ນຄວ້າວິທະຍາສາດສາທາລະນະສຸກ, ວຽກງານການເງິນສາທາລະນະສຸກ, ວຽກງານແຜນການ, ການຮ່ວມມື ແລະ ຂໍ້ມູນຂ່າວສານສາທາລະນະສຸກ, ວຽກງານບໍລິຫານຄຸ້ມຄອງ ແລະ ກວດກາ ພາຍໃນແຂວງ, ນະຄອນຫຼວງ ຕາມການແບ່ງຂັ້ນຄຸ້ມຄອງ.



สแกนด้วย CamScanner

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ປະກອບມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມແນວທາງຂອງພັກ, ນະໂຍບາຍ, ກົດໝາຍ ແລະ ລະບຽບການຂອງລັດຖະບານ ກ່ຽວກັບວຽກງານສາທາລະນະສຸກ;
2. ປະຕິບັດກົດໝາຍ ແລະ ນິຕິກຳຕ່າງໆ ຂອງອົງການປົກຄອງແຂວງ, ນະຄອນຫຼວງ, ກະຊວງສາທາລະນະສຸກ ແລະ ລັດຖະບານວາງອອກ;
3. ສ້າງແຜນການ, ແຜນງານ ແລະ ໂຄງການລະອຽດ ໃຫ້ແທດເໝາະກັບຈຸດພິເສດຂອງທ້ອງຖິ່ນຕົນ ເພື່ອສະເໜີ ຂັ້ນເທິງພິຈາລະນາ ພ້ອມທັງ ຈັດຕັ້ງປະຕິບັດແຜນການແຕ່ລະໄລຍະ ທີ່ຖືກຮັບຮອງໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
4. ຊີ້ນຳ, ນຳພາ, ຄຸ້ມຄອງວຽກງານ ອະນາໄມ ແລະ ສົ່ງເສີມສຸຂະພາບ
   - ຈັດຕັ້ງປະຕິບັດ ວຽກງານ ອະນາໄມ ເປັນຕົ້ນ: ການອະນາໄມສິ່ງແວດລ້ອມ, ການອະນາໄມ ອາຫານ, ເຄື່ອງບໍລິໂພກ, ນ້ຳດື່ມ ແລະ ນ້ຳໃຊ້, ການອະນາໄມໃນການປະກອບອາຊີບ, ການອະນາໄມໃນເຂດໄພພິບັດ ແລະ ວຽກງານສົ່ງເສີມສຸຂະພາບ ເປັນຕົ້ນ: ການສົ່ງເສີມສຸຂະພາບ ໄວໜຸ່ມ ແລະ ໄວຈະເລີນພັນ, ການສົ່ງເສີມ ແມ່ຍິງ, ເດັກອ່ອນ ແລະ ເດັກນ້ອຍ, ການສົ່ງເສີມໂພຊະນາການ, ການສົ່ງເສີມສຸຂະສຶກສາ ແລະ ອື່ນໆ;
   - ເກັບກຳສະພາບການ, ຄົ້ນຄວ້າ, ສັງລວມ, ວິໄຈ ວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ພາຍໃນ ແຂວງ, ນະຄອນຫຼວງ ແນໃສ່ຊອກໃຫ້ເຫັນສິ່ງທີ່ພົ້ນເດັ່ນເພື່ອສົ່ງເສີມດ້ານຕັ້ງໜ້າ, ສາເຫດອັນດີ, ບັນຫາອັນອ່ອນ ແລະ ຫຍໍ້ທໍ້ ເພື່ອຊອກຫາວິທີການແກ້ໄຂຢ່າງມີປະສິດທິພາບ;
   - ຄຸ້ມຄອງ, ຕິດຕາມ ແລະ ກວດກາ ມາດຕະຖານດ້ານອະນາໄມສິ່ງແວດລ້ອມ ພ້ອມທັງ ຄຸ້ມຄອງຄຸນນະພາບນ້ຳສະອາດ ເປັນຕົ້ນ ນ້ຳດື່ມນ້ຳໃຊ້, ນ້ຳລົບ, ວິດຖ່າຍ ແລະ ຄວາມສະອາດຂອງອາຫານ ຢູ່ຊຸມຊົນ, ສະຖານການສຶກສາ, ສະຖານທີ່ສາທາລະນະ, ສະຖານທີ່ບໍລິການສຸຂະພາບ, ສະຖານທີ່ຄຸມຂັງ, ຮ້ານອາຫານ, ພັດທະຄານ, ໂຮງແຮມ-ເຮືອນພັກ ລວມທັງສະຖານທີ່ຂາຍອາຫານທົ່ວໄປ ຕາມທ້ອງຕະຫຼາດ, ອາຫານແຄມທາງ, ລົ້ຍູ້ ແລະ ອື່ນໆ ໂດຍສົມທົບກັບຂະແໜງອາຫານ ແລະ ຢາ;
   - ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄວບຄຸມຢາສູບ, ກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ກົດໝາຍວ່າດ້ວຍການໃຊ້ວັກຊີນ, ກົດໝາຍວ່າດ້ວຍການອະນາໄມ ແລະ ສົ່ງເສີມສຸຂະພາບ, ກົດໝາຍ ແລະ ບັນດານິຕິກຳອື່ນທີ່ກ່ຽວຂ້ອງ;
   - ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຫ້ອງການສາທາລະນະສຸກເມືອງ, ເທດສະບານ ແລະ ນະຄອນ ໃນການຈັດຕັ້ງປະຕິບັດ ວຽກງານ ອະນາໄມ ແລະ ສົ່ງເສີມສຸຂະພາບ;
   - ກວດກາ, ກວດການ ແລະ ປະເມີນຜົນ ດ້ານວິຊາການ ທີ່ພົວພັນເຖິງ ວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບພາຍໃນແຂວງ, ນະຄອນຫຼວງ ລວມທັງຜົນກະທົບຈາກໂຮງງານ;
   - ຄົ້ນຄວ້າປະກອບຄຳເຫັນ, ກວດຜ່ານບັນດາເອກະສານ ແລະ ອຳນວຍຄວາມສະດວກ ກ່ຽວກັບ ວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ຕາມການສະເໜີຂອງພາກສ່ວນທີ່ກ່ຽວຂ້ອງ;
   - ພົວພັນ, ປະສານງານ ວຽກງານ ອະນາໄມ ແລະ ສົ່ງເສີມສຸຂະພາບ ກັບທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາຕາໜ່າງອະນາໄມ ແລະ ສົ່ງເສີມສຸຂະພາບ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
   - ຄົ້ນຄວ້າ ແລະ ເຜີຍແຜ່ ຜົນການຄົ້ນຄວ້າວິທະຍາສາດ ເພື່ອປັບປຸງແຜນງານ, ແຜນການ ແລະ ໂຄງການ ໃນການຈັດຕັ້ງປະຕິບັດວຽກງານໃຫ້ດີຂຶ້ນ;



สแกนด้วย CamScanner

- ສ້າງແຜນການງົບປະມານ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວ ວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ແຕ່ລະໄລຍະ ພ້ອມທັງ ສະຫຼຸບສັງລວມລາຍຮັບ-ລາຍຈ່າຍ ຕາມລະບຽບການ.

5. ຊີ້ນໍາ, ນໍາພາ, ຄຸ້ມຄອງວຽກງານ ການກັນ ແລະ ຄວບຄຸມພະຍາດຕິດຕໍ່
   - ເກັບກໍາສະພາບ, ສັງລວມ, ຄົ້ນຄວ້າ, ວິໄຈ ວຽກງານກັນ ແລະ ຄວບຄຸມພະຍາດຕິດຕໍ່ ລວມທັງ ພະຍາດຊຶມເຊື້ອທີ່ເກີດຂຶ້ນໃໝ່ ແລະ ກັບຄືນມາໃໝ່ ທີ່ມີທ່າອ່ຽງຂອງການເກີດພະຍາດ ແນໃສ່ຊອກໃຫ້ເຫັນສິ່ງທີ່ພົ້ນເດັ່ນເພື່ອສົ່ງເສີມດ້ານຕັ້ງໜ້າ; ບັນຫາ, ສາຍເຫດ, ປັດໃຈສ່ຽງ, ຂໍ້ຄົງຄ້າງ ແລະ ຫຍໍ້ທໍ້ ເພື່ອຊອກຫາວິທີການ, ມາດຕະການ, ແກ້ໄຂ, ຕອບໂຕ້ ຫຼື ສະກັດກັ້ນຢ່າງທັນການ ແລະ ລາຍງານ ການຈັດຕັ້ງປະຕິບັດໃຫ້ຂັ້ນເທິງຢ່າງເປັນປົກກະຕິ ແລະ ລາຍງານກໍລະນີດ່ວນ ພາຍໃນ 24 ຊົ່ວໂມງ ເພື່ອຂໍທິດຊີ້ນໍາ;
   - ຄົ້ນຄວ້າ, ເຜີຍແຜ່ ແລະ ນໍາໃຊ້ຜົນການຄົ້ນຄວ້າວິທະຍາສາດ, ການສໍາຫຼວດ ໂດຍສົມທົບທາງດ້ານ ວິຊາການກັບກົມຄວບຄຸມພະຍາດຕິດຕໍ່ ເພື່ອສະກັດກັ້ນ ແລະ ຕ້ານການລະບາດຂອງພະຍາດຕ່າງໆ ແລະ ຈັດຕັ້ງປະຕິບັດວຽກງານກັນ ແລະ ຄວບຄຸມພະຍາດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
   - ຄຸ້ມຄອງ, ເຝົ້າລະວັງ, ຕອບໂຕ້ ຕໍ່ການລະບາດຂອງພະຍາດ ແລະ ອໍານວຍຄວາມສະດວກ ໃຫ້ແກ່ຫ້ອງການສາທາລະນະສຸກເມືອງ ແລະ ພາກສ່ວນກ່ຽວຂ້ອງ ທາງດ້ານວິຊາການໃນວຽກງານກັນ ແລະ ຄວບຄຸມພະຍາດຕິດຕໍ່ ເປັນຕົ້ນ: ໄຂ້ຍຸງລາຍ, ໄຂ້ມາລາເຣັຍ, ວັນນະໂລກ, ໂລກເອດ, ແລະ ພະຍາດຕິດ ຕໍ່ທາງ ເພດສໍາພັນ(ພຕພ), ວຽກງານວິເຄາະ ແລະ ລະບາດວິທະຍາ, ພະຍາດຕິດຕໍ່ຈາກສັດສູ່ຄົນ-ຈຸດຜ່ານແດນ ແລະ ພະຍາດຕິດຕໍ່ອື່ນໆ;
   - ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ກວດກາ ວຽກງານການກັນ ແລະ ຄວບຄຸມພະຍາດຕິດຕໍ່ ປະຈໍາ ດ່ານຊາຍແດນ ແລະ ສະໜາມບິນສາກົນ ໃນຂອບເຂດທົ່ວປະເທດ;
   - ຊຸກຍູ້, ຕິດຕາມ, ກວດກາ, ແລະ ປະເມີນທາງດ້ານວິຊາການທີ່ພົວພັນເຖິງວຽກງານ ກັນ ແລະ ຄວບຄຸມ ພະຍາດຕິດຕໍ່ ລວມທັງພະຍາດຊຶມເຊື້ອທີ່ເກີດຂຶ້ນໃໝ່ ກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ຕາມການອະນຸມັດ;
   - ປະສານງານ ແລະ ພົວພັນ ດ້ານວິຊາການ ກ່ຽວກັບວຽກງານກັນ ແລະ ຄວບຄຸມພະຍາດຕິດຕໍ່ ລວມທັງ ພະຍາດຊຶມເຊື້ອທີ່ເກີດຂຶ້ນໃໝ່ ແລະ ກັບຄືນໃໝ່ ກັບພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ, ເອກະຊົນ, ພາຍໃນ ແລະ ຕ່າງປະເທດ ຕາມການອະນຸມັດ;
   - ຄົ້ນຄວ້າ ຄັດເລືອກພະນັກງານ-ລັດຖະກອນ ໄປປະຈໍາຢູ່ດ່ານຊາຍແດນ ໃຫ້ສອດຄ່ອງຕາມເງື່ອນໄຂ ແລະ ມາດຕະຖານ ດ້ານວຽກງານຄວບຄຸມພະຍາດຕິດຕໍ່ ທີ່ກໍານົດໄວ້;
   - ສ້າງແຜນການງົບປະມານໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ກ່ຽວກັບວຽກງານກັນ ແລະ ຄວບຄຸມພະຍາດຕິດຕໍ່ ລວມທັງພະຍາດຊຶມເຊື້ອທີ່ເກີດຂຶ້ນໃໝ່ ແລະ ກັບຄືນມາໃໝ່ ໂດຍສັງລວມເອົາ ແຜນຂອງຫ້ອງການສາທາລະນະສຸກເມືອງ, ເທດສະບານ, ນະຄອນ ແລະ ໂຮງໝໍນ້ອຍ ພ້ອມທັງ ສະຫຼຸບລາຍຮັບ-ລາຍຈ່າຍ ຕາມລະບຽບການ;
   - ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່, ກົດໝາຍວ່າດ້ວຍການຕ້ານ ແລະ ຄວບຄຸມພະຍາດເອດ, ກົດໝາຍ, ບັນດານິຕິກໍາອື່ນທີ່ກ່ຽວຂ້ອງ ແລະ ສົນທິສັນຍາສາກົນທີ່ ສປປ.ລາວ ເປັນພາຄີ ລວມທັງ ການຄຸ້ມຄອງການລະບາດພະຍາດ ຢູ່ໂຮງຈັກ, ໂຮງງານ.

6. ຊີ້ນໍາ, ນໍາພາ, ຄຸ້ມຄອງວຽກງານ ປິ່ນປົວ ແລະ ຟື້ນຟູໜ້າທີ່ການ
   - ຄົ້ນຄວ້າ, ເຜີຍແຜ່ ແລະ ນໍາໃຊ້ຜົນການສໍາເລັດຂອງການຄົ້ນຄວ້າເຕັກນິກທາງການແພດ ກ່ຽວກັບ ການປິ່ນປົວຂອງພາຍໃນ ແລະ ຕ່າງປະເທດ ເພື່ອເປັນການສົ່ງເສີມການປິ່ນປົວ ແລະ ຟື້ນຟູຊີບ-ຟື້ນຟູໜ້າທີ່ການ ພາຍໃນແຂວງ, ນະຄອນຫຼວງ;



สแกนด้วย CamScanner

- ເກັບກຳສະພາບ, ຄົ້ນຄວ້າວິໄຈ, ສະໜອງຂໍ້ມູນສະຖິຕິ, ສະຫຼຸບສັງລວມ ແລະ ລາຍງານ ກ່ຽວກັບ ວຽກງານ ປິ່ນປົວ ແລະ ຟື້ນຟູໜ້າທີ່ການ ຈາກສະຖານທີ່ບໍລິການປິ່ນປົວ ຈາກພາກລັດ ແລະ ເອກະຊົນ ຢ່າງຄົບຖ້ວນເປັນປົກກະຕິ;
- ຄຸ້ມຄອງ, ຊຸກຍູ້, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ໂຮງໝໍພາກ, ໂຮງໝໍແຂວງ, ໂຮງໝໍຊຸມຊົນ ແລະ ໂຮງໝໍນ້ອຍ ລວມທັງ ໂຮງໝໍ ແລະ ຫ້ອງກວດພະຍາດເອກະຊົນ ໃນການສະໜອງ ການບໍລິການປິ່ນປົວ ແລະ ຟື້ນຟູໜ້າທີ່ການ ໃຫ້ຖືກຕ້ອງຕາມຫຼັກວິຊາການ, ມາດຖານເຕັກນິກ, ກົດໝາຍ ແລະ ລະບຽບການຕ່າງໆ ດ້ານການປິ່ນປົວ ລວມທັງ ນະໂຍບາຍ 5 ດີ 1 ພໍໃຈ ໃຫ້ມີປະສິດທິພາບ;
- ຄຸ້ມຄອງການບໍລິການ ແລະ ໂຄສະນາ ກ່ຽວກັບການປິ່ນປົວ ແລະ ຟື້ນຟູໜ້າທີ່ການ ປະເພດຕ່າງໆ ພາຍໃນແຂວງ, ນະຄອນຫຼວງ ເພື່ອສະກັດກັ້ນການລະເມີດກົດໝາຍ ແລະ ລະບຽບການທີ່ກຳນົດໄວ້ໃນແຕ່ລະໄລຍະ;
- ຄຸ້ມຄອງ ຄ່າບໍລິການປິ່ນປົວ ໃນສະຖານທີ່ບໍລິການປິ່ນປົວຂອງພາກເອກະຊົນ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງ;
- ຄົ້ນຄວ້າ, ແກ້ໄຂ ແລະ ນຳສະເໜີການປະຕິບັດ ມາດຕະການຕໍ່ຜູ້ລະເມີດ ກ່ຽວກັບການເຄື່ອນໄຫວ ແລະ ບໍລິການປິ່ນປົວ ບໍ່ສອດຄ່ອງກັບລະບຽບຫຼັກການຂອງພາກເອກະຊົນ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
- ຄຸ້ມຄອງ, ສົ່ງເສີມໃຫ້ສະຖານທີ່ບໍລິການປິ່ນປົວຂອງລັດ ແລະ ເອກະຊົນ ສົມທົບການປິ່ນປົວດ້ວຍການແພດທັນສະໄໝ ແລະ ການແພດພື້ນເມືອງ ເຂົ້າໃນການປິ່ນປົວພະຍາດ;
- ຄົ້ນຄວ້າ, ປະກອບຄຳເຫັນດ້ານວິຊາການປິ່ນປົວໃຫ້ພາກສ່ວນກ່ຽວຂ້ອງ ເພື່ອນຳສະເໜີສ້າງຕັ້ງໂຮງໝໍ ແລະ ຫ້ອງກວດພະຍາດເອກະຊົນ ພາຍໃນແຂວງ, ນະຄອນຫຼວງ ໃຫ້ໄດ້ມາດຕະຖານ ຕາມລະບຽບການ;
- ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດບັນດາມາດຕະຖານດ້ານພື້ນຖານໂຄງລ່າງ, ອຸປະກອນການແພດ ແລະ ບຸກຄະລາກອນ ທີ່ປະກອບເຂົ້າໃນສະຖານທີ່ບໍລິການປິ່ນປົວພາຍໃນແຂວງ, ນະຄອນຫຼວງ ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;
- ຄົ້ນຄວ້າ, ສັງລວມ ແລະ ນຳສະເໜີ ຄຳຮ້ອງຂໍອະນຸຍາດປະກອບວິຊາຊີບປິ່ນປົວຂອງພາກລັດ ແລະ ເອກະຊົນຕໍ່ສະພາຄຸ້ມຄອງວິຊາຊີບປິ່ນປົວ ຕາມກົດໝາຍ ວ່າດ້ວຍການປິ່ນປົວ ແລະ ລະບຽບການຄຸ້ມຄອງ ຜູ້ປະກອບວິຊາຊີບປິ່ນປົວ;
- ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຄຸ້ມຄອງ, ຊຸກຍູ້, ຊີ້ນຳ ແລະ ປັບປຸງຕາໜ່າງດ້ານການປິ່ນປົວ ພາຍໃນແຂວງ, ນະຄອນຫຼວງ;
- ຂື້ນແຜນ, ສັງລວມແຜນຄວາມຕ້ອງການ ແລະ ສະໜອງເຄື່ອງມື ແລະ ອຸປະກອນການແພດ ຂັ້ນພື້ນຖານຂອງຄະນະກຳມະການຈັດຊື້-ຈັດຈ້າງສະໜອງໃຫ້ທັນເວລາ ເພື່ອຮັບປະກັນດ້ານຄວາມຕ້ອງການຂອງການບໍລິການ ໃຫ້ແກ່ໂຮງໝໍພາກ, ໂຮງໝໍແຂວງ, ໂຮງໝໍຊຸມຊົນ ແລະ ໂຮງໝໍນ້ອຍ ຕາມມາດຕະຖານທີ່ກະຊວງສາທາລະນະສຸກວາງອອກ.

7. ຊີ້ນຳ, ນຳພາ, ຄຸ້ມຄອງວຽກງານ ອາຫານ ແລະ ຢາ
   - ຄົ້ນຄວ້າ ແລະ ນຳສະເໜີຕໍ່ກະຊວງສາທາລະນະສຸກ ກ່ຽວກັບ ການຂໍອະນຸມັດສຳຫຼວດ, ຂຸດຄົ້ນຊັບພະຍາກອນທຳມະຊາດທີ່ເປັນຢາ ແລະ ສ້າງຕັ້ງຫົວໜ່ວຍທຸລະກິດ, ຂຶ້ນທະບຽນ, ຈົດແຈ້ງ, ຢັ້ງຢືນ, ວິໄຈຄຸນນະພາບ, ອະນຸຍາດໂຄສະນາ, ສົ່ງອອກ-ນຳເຂົ້າ ຜະລິດຕະພັນອາຫານ, ຢາ ແລະ ຜະລິດຕະພັນການແພດ ຂອງພາກສ່ວນທີ່ກ່ຽວຂ້ອງ;
   - ຄົ້ນຄວ້າ ແລະ ສະເໜີ ສັ່ງໂຈະ ຫຼື ຍົກເລີກ ຫົວໜ່ວຍທຸລະກິດ ກ່ຽວກັບ ອາຫານ, ຢາ ແລະ ຜະລິດ ຕະພັນການແພດ ທີ່ດຳເນີນການບໍ່ສອດຄ່ອງ ກັບກົດໝາຍ ແລະ ລະບຽບການ;



สแกนด้วย CamScanner

- ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດບັນດາມາດຕະຖານເຕັກນິກຂອງຜະລິດຕະພັນອາຫານ, ອາຫານເສີມ, ຢາຫຼວງ, ຢາພື້ນເມືອງ, ຊັບພະຍາກອນທຳມະຊາດທີ່ເປັນຢາ, ອຸປະກອນການແພດ, ຜະລິດຕະພັນເສີມສຸຂະພາບ, ເຄື່ອງສຳອາງ, ສານເສບຕິດທາງການແພດ, ວັດຖຸອອກລິດຕໍ່ຈິດປະສາດ, ເຄມີຄວບຄຸມ ແລະ ເຄມີອັນຕະລາຍທີ່ໃຊ້ໃນຄົວເຮືອນ, ເຄື່ອງດື່ມທຸກປະເພດ ລວມທັງ ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ການບໍລິການອາຫານ ໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບທີ່ກຳນົດໄວ້;
- ເກັບຕົວຢ່າງ, ທົດສອບ, ວິໄຈຄຸນນະພາບຜະລິດຕະພັນອາຫານ, ຢາ ແລະ ຜະລິດຕະພັນການແພດ ຕາມຄວາມສາມາດຂອງພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ພ້ອມທັງ ເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການທີ່ກຳນົດໄວ້;
- ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການສຳຫຼວດ, ຂຸດຄົ້ນ, ປຸງແຕ່ງ, ປູກລ້ຽງ, ຜະລິດ, ນຳໃຊ້ ແລະ ສົ່ງອອກຊັບພະຍາກອນທຳມະຊາດທີ່ເປັນຢາ ຂອງຫົວໜ່ວຍທຸລະກິດທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ;
- ຄົ້ນຄວ້າ, ສຳຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງ ຊັບພະຍາກອນທຳມະຊາດທີ່ເປັນຢາ, ສ້າງ ແລະ ປັບປຸງສວນພຶກສາສາດ ແລະ ຕົ້ນໄມ້ທີ່ ເປັນຢາ ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ;
- ສົ່ງເສີມການສືບຄົ້ນພູມປັນຍາຂອງປະຊາຊົນ ກ່ຽວກັບ ຕຳລາຢາພື້ນເມືອງ, ການນຳໃຊ້ຊັບພະຍາກອນທຳມະຊາດທີ່ເປັນຢາ ເພື່ອນຳໃຊ້ເຂົ້າໃນການກັນ ແລະ ປິ່ນປົວພະຍາດໃຫ້ກວ້າງຂວາງ ໂດຍສົມທົບກັບ ພາກສ່ວນກ່ຽວຂ້ອງ;
- ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ສົ່ງເສີມ ທຸກຫົວໜ່ວຍການຈັດຕັ້ງຂອງລັດ, ເອກະຊົນທີ່ດຳເນີນທຸລະກິດກ່ຽວກັບ ອາຫານ, ຢາ ແລະ ຜະລິດຕະພັນການແພດ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
- ສັງລວມ ແລະ ນຳສະເໜີ ເພື່ອຂໍອະນຸມັດ ຫຼື ລົບລ້າງໃບອະນຸຍາດວິຊາຊີບເພສັດຊະກຳ ເພື່ອປະກອບ ເອກະສານໃນການດຳເນີນທຸລະກິດກ່ຽວກັບອາຫານ ແລະ ຢາ ຫຼື ຄົ້ນຄວ້າສະເໜີຂໍອະນຸມັດ ຫຼື ລົບລ້າງໃບອະນຸຍາດວິຊາຊີບເພສັດຊະກຳ ຕາມກົດໝາຍ ແລະ ລະບຽບການ;
- ຄຸ້ມຄອງ, ຕິດຕາມເນື້ອໃນການໂຄສະນາ ທາງດ້ານວິຊາການ ກ່ຽວກັບຜະລິດຕະພັນອາຫານ, ຢາ, ອຸປະກອນການແພດ ແລະ ຜະລິດຕະພັນການແພດ ພາຍໃນຂອບເຂດຄວາມຮັບຜິດຊອບ ໂດຍປະສານ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ;
- ກວດກາຜະລິດຕະພັນອາຫານ, ຢາ ແລະ ຜະລິດຕະພັນການແພດ ທີ່ສົ່ງອອກ, ນຳເຂົ້າ ແລະ ສົ່ງຜ່ານ ຢູ່ດ່ານຊາຍແດນ ຕາມກົດໝາຍ ແລະ ລະບຽບການທີ່ວາງອອກ;
- ສົມທົບກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ຄຸນນະພາບຄວາມປອດໄພຂອງອາຫານ ຢູ່ຊຸມຊົນ, ສະຖານການສຶກສາ, ສະຖານທີ່ສາທາລະນະ, ສະຖານທີ່ບໍລິການສຸຂະພາບ, ສະຖານທີ່ຄຸມຂັງ, ຮ້ານອາຫານ, ພັດທະຄານ, ໂຮງແຮມ-ເຮືອນພັກ ລວມທັງສະຖານທີ່ຂາຍອາຫານທົ່ວໄປຕາມທ້ອງຕະຫຼາດ, ອາຫານແຄມທາງ, ລໍ້ຍູ້ ແລະ ອື່ນໆ ເພື່ອຕີລາຄາ ແລະ ອອກໃບຢັ້ງຢືນອາຫານປອດໄພ ແລະ ສຸຂະພາບດີ ຕາມລະບຽບການ;
- ຄົ້ນຄວ້າ ຄັດເລືອກພະນັກງານ-ລັດຖະກອນ ໄປປະຈຳຢູ່ດ່ານຊາຍແດນ ໃຫ້ສອດຄ່ອງຕາມເງື່ອນໄຂ ແລະມາດຕະຖານ ດ້ານວຽກງານອາຫານ, ຢາ ແລະ ຜະລິດຕະພັນການແພດ ທີ່ກຳນົດໄວ້;
- ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ກວດກາ ວຽກງານ ອາຫານ ແລະ ຢາ ປະຈຳ ດ່ານຊາຍແດນ ແລະ ສະໜາມບິນສາກົນ ໃນຂອບເຂດທົ່ວປະເທດ;
- ຄຸ້ມຄອງສາງຢາ ແລະ ອຸປະກອນການແພດ ພ້ອມທັງ ສັງລວມ ແລະ ສ້າງແຜນຄວາມຕ້ອງການ, ຈັດຊື້ ແລະ ສະໜອງຢາ, ອຸປະກອນ ແລະ ຜະລິດຕະພັນການແພດ ພາຍໃນຂອບເຂດຄວາມຮັບຜິດຊອບ ຂອງຕົນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;



สแกนด้วย CamScanner

- ເກັບກຳ, ຄົ້ນຄວ້າ, ສັງລວມ ແລະ ວິໄຈ ສະພາບການຄຸ້ມຄອງວຽກງານອາຫານ, ຢາ ແລະ ຜະລິດຕະພັນ ການແພດ ພາຍໃນແຂວງ, ນະຄອນຫຼວງ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນ ພ້ອມທັງ ເຜີຍແຜ່ຂໍ້ມູນສະຖິຕິຮອບດ້ານ;
- ຊຸກຍູ້, ຕິດຕາມ ແລະ ປະເມີນ ການຈັດຕັ້ງປະຕິບັດວຽກງານອາຫານ, ຢາ ແລະ ຜະລິດຕະພັນການແພດ ຕາມການແບ່ງຂັ້ນຄຸ້ມຄອງ ໃນແຕ່ລະໄລຍະ.

8. ຊີ້ນຳ, ນຳພາ, ຄຸ້ມຄອງວຽກງານ ປະກັນສຸຂະພາບ ຂັ້ນແຂວງ
   - ເປັນເສນາທິການໃຫ້ແກ່ຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບຂັ້ນແຂວງ, ນະຄອນຫຼວງ (ຄປຂ) ແລະ ຫົວໜ້າພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ໃນການວາງແຜນໄລຍະສັ້ນ, ໄລຍະກາງ, ໄລຍະຍາວ ກ່ຽວກັບວຽກງານ ປະກັນສຸຂະພາບ ພາຍໃນແຂວງ, ນະຄອນຫຼວງ;
   - ຄຸ້ມຄອງ, ບໍລິຫານດ້ານການເງິນ ຂອງກອງທຶນປະກັນສຸຂະພາບແຫ່ງຊາດ ພາຍໃນແຂວງ, ນະຄອນຫຼວງ;
   - ຂຶ້ນທະບຽນ, ຮັບເງິນປະກອບສ່ວນ ພ້ອມທັງ ສະຫຼຸບ ແລະ ລາຍງານ ກ່ຽວກັບກອງທຶນປະກັນສຸຂະພາບແຫ່ງຊາດ ພາຍໃນແຂວງ, ນະຄອນຫຼວງ ໃນແຕ່ລະເດືອນ, ແຕ່ລະງວດ ແລະ ແຕ່ລະປີ ໃຫ້ພາກສ່ວນທີ່ກ່ຽວຂ້ອງ;
   - ຄົ້ນຄວ້າ, ພິຈາລະນາ, ແກ້ໄຂວຽກງານປະກັນສຸຂະພາບພາຍໃນແຂວງ, ນະຄອນຫຼວງ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
   - ໂຄສະນາເຜີຍແຜ່, ປະຊາສຳພັນ, ສ້າງແຜນການ ແລະ ກິດຈະກຳຕ່າງໆ ກ່ຽວກັບວຽກງານປະກັນສຸຂະພາບ ພາຍໃນແຂວງ, ນະຄອນຫຼວງ;
   - ຊຸກຍູ້, ຕິດຕາມ, ກວດກາ ແລະ ກວດສອບ ການໃຫ້ການບໍລິການ ຂອງສະຖານທີ່ບໍລິການປິ່ນປົວ ແຕ່ລະງວດ;
   - ຊຸກຍູ້, ຕິດຕາມ, ປະເມີນຜົນ ແລະ ສັງລວມການຈັດຕັ້ງປະຕິບັດວຽກງານປະກັນສຸຂະພາບ ພາຍໃນແຂວງ, ນະຄອນຫຼວງ.

9. ຊີ້ນຳ, ນຳພາ, ຄຸ້ມຄອງວຽກງານ ຈັດຕັ້ງ-ພະນັກງານ, ການສຶກສາ ແລະ ກວດກາ
   - ຈັດຕັ້ງປະຕິບັດແຜນການ, ແຜນງານ ແລະ ໂຄງການກ່ຽວກັບວຽກພັກ, ວຽກງານອົງການຈັດຕັ້ງມະຫາຊົນ, ວຽກງານກົງຈັກການຈັດຕັ້ງ, ວຽກງານຄຸ້ມຄອງພະນັກງານ-ລັດຖະກອນ, ວຽກງານສຶກສາ ສາທາລະນະສຸກ ແລະ ວຽກງານກວດກາ ໃຫ້ສອດຄ່ອງຕາມແຜນຍຸດທະສາດ ແລະ ແຜນພັດທະນາໃນແຕ່ລະໄລຍະ;
   - ສຶກສາອົບຮົມການເມືອງແນວຄິດ ໃຫ້ພະນັກງານ-ລັດຖະກອນ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ ໂດຍຈັດຕັ້ງ ແລະ ເຜີຍແຜ່, ມະຕິ, ຄຳສັ່ງ, ຄຳແນະນຳ ລວມທັງການປາຖະກາຖາ ແລະ ເລົ່າມູນເຊື້ອເນື່ອງໃນວັນສຳຄັນຕ່າງໆ ຕາມການອະນຸມັດ;
   - ປັບປຸງ ວຽກງານກໍ່ສ້າງ ແລະ ຂະຫຍາຍພັກ, ວຽກງານພະນັກງານ ແລະ ອົງການຈັດຕັ້ງມະຫາຊົນ;
   - ຄົ້ນຄວ້າ, ປັບປຸງ ແລະ ນຳສະເໜີ ກ່ຽວກັບວຽກງານປັບປຸງກົງຈັກ ການຈັດຕັ້ງພັກ-ລັດ ແລະ ການກຳນົດຕຳແໜ່ງງານຂອງຕົນ ເພື່ອສະເໜີຂັ້ນເທິງພິຈາລະນາ;
   - ຂຶ້ນແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ແຜນບຳລຸງພະນັກງານ-ລັດຖະກອນ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງ;
   - ຄົ້ນຄວ້າສ້າງແຜນພັດທະນາພະນັກງານ-ລັດຖະກອນ, ຄຸ້ມຄອງຂໍ້ມູນສະຖິຕິ, ຊີວະປະຫັວດຂອງ ສະມາຊິກພັກ, ພະນັກງານ-ລັດຖະກອນ ໃນຄວາມຮັບຜິດຊອບຂອງຕົນ;
   - ຈັດຕັ້ງສອບເສັງ, ບັນຈຸ, ເລື່ອນ ແລະ ດັດແກ້ຊັ້ນ-ຂັ້ນເງິນເດືອນ ແລະ ປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ;
   - ຄົ້ນຄວ້າ ແລະ ນຳສະເໜີການແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ການສັບປ່ຽນບ່ອນປະຈຳການ ແລະ ການປະຕິບັດວິໄນຕໍ່ພະນັກງານ-ລັດຖະກອນ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງ;



สแกนด้วย CamScanner

- ຄົ້ນຄວ້າ ແລະ ນຳສະເໜີກ່ຽວກັບການປະຕິບັດນະໂຍບາຍ, ການຍ້ອງຍໍ, ການອຸດໜູນປະເພດ ຕ່າງໆຕໍ່ພະນັກງານ-ລັດຖະກອນ ແລະ ພະນັກງານບໍານານ;
- ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ຄຸນນະພາບການສຶກສາ ດ້ານການຮຽນ-ການສອນ ແລະ ການຄົ້ນຄວ້າດ້ານວິທະຍາສາດ ສາທາລະນະສຸກ ພາຍໃນແຂວງ, ນະຄອນຫຼວງ;
- ສັງລວມສະຖິຕິຂໍ້ມູນພະນັກງານ, ການບໍາລຸງ-ກໍ່ສ້າງ, ການຝຶກອົບຮົມ ແລະ ການຄົ້ນຄວ້າວິທະຍາສາດ;
- ຄົ້ນຄວ້າ, ສັງລວມ ແລະ ນຳສະເໜີ ກ່ຽວກັບການຂໍອະນຸມັດຕໍາແໜ່ງວິຊາການ ແລະ ວິທະຍາຖານະຂອງ ຄູ ໂດຍປະສານງານກັບພາກສ່ວນທີ່ກ່ຽວຂ້ອງ;
- ຕິດຕາມ, ກວດກາຂະບວນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ທີ່ຂຶ້ນກັບຄະນະພັກຮາກຖານຂອງຕົນ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງ;
- ຄົ້ນຄວ້າ, ສັງລວມ, ເກັບກໍາຂໍ້ມູນ ແລະ ນໍາສະເໜີວິທີການແກ້ໄຂ ຄໍາຮ້ອງ, ຄໍາສະເໜີຂອງການຈັດຕັ້ງ ແລະບຸກຄົນ ທີ່ກ່ຽວຂ້ອງກັບວຽກງານສາທາລະນະສຸກ ພາຍໃນແຂວງ, ນະຄອນຫຼວງ;
- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການເກັບກໍາຂໍ້ມູນ ກ່ຽວກັບການສໍ້ລາດບັງຫຼວງ ພ້ອມທັງ ລາຍງານຂັ້ນເທິງ ເພື່ອພິຈະລະນາຕາມກົດໝາຍທີ່ໄດ້ກໍານົດໄວ້;
- ຊີ້ນໍາ, ຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດນິຕິກໍາ, ພາລະບົດບາດ ຂອງການຈັດຕັ້ງ, ໂຄງການລົງທຶນຂອງລັດ, ການຄຸ້ມຄອງແຜນການ-ການເງິນ, ຜົນຂອງການກວດກາ-ກວດສອບ ແລະ ບັນດາໂຄງການຮ່ວມມືສາກົນ ທີ່ມາຈັດຕັ້ງປະຕິບັດພາຍໃນແຂວງ, ນະຄອນຫຼວງ ກ່ຽວກັບວຽກງານສາທາລະນະສຸກ;
- ຈັດຕັ້ງປະຕິບັດການແຈ້ງຊັບສິນ, ລາຍຮັບຂອງພະນັກງານ-ລັດຖະກອນ, ສະກັດກັ້ນ ແລະ ຕ້ານການ ສໍ້ລາດບັງຫຼວງ ແລະ ປະກົດການຫຍໍ້ທໍ້ຢູ່ໃນການຈັດຕັ້ງພັກ-ລັດ ແລະ ອົງການຈັດຕັ້ງມະຫາຊົນ;
- ຄົ້ນຄວ້າ ແລະ ນໍາສະເໜີ ກ່ຽວກັບ ມາດຕະການ ແລະ ວິທີການແກ້ໄຂຜົນການກວດກາ;
- ພົວພັນ, ຮ່ວມມືກັບອົງການຈັດຕັ້ງພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອສົ່ງເສີມ ແລະຄຸ້ມຄອງການຄົ້ນຄວ້າວິທະຍາສາດ ຕາມການອະນຸມັດ;
- ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການດໍາເນີນການກວດກາ, ການແກ້ໄຂ ແລະ ປະຕິບັດຜົນການກວດກາໃຫ້ມີປະສິດທິພາບ.

10. ຊີ້ນໍາ, ນໍາພາ, ຄຸ້ມຄອງວຽກງານ ແຜນການ ແລະ ການເງິນ
- ຄົ້ນຄວ້າ, ສັງລວມ, ສ້າງແຜນການ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດ ປະຈໍາ 3 ເດືອນ, 6 ເດືອນ, 9 ເດືອນ, ປີ ແລະ 5 ປີ ພ້ອມທັງ ຊຸກຍູ້, ຕິດຕາມ, ປະເມີນຜົນ ຢ່າງເປັນປົກກະຕິ;
- ຊີ້ນໍາ, ຄຸ້ມຄອງ, ຄົ້ນຄວ້າ, ກວດຜ່ານ ແລະ ດັດປັບ ວຽກງານແຜນການ, ການລົງທຶນ ແລະ ສະຖິຕິ ຂອງການຈັດຕັ້ງ ແລະ ຫົວໜ່ວຍວິຊາການຕ່າງໆ;
- ຕິດຕາມການຈັດຕັ້ງປະຕິບັດບັນດາກົນໄກ, ນະໂຍບາຍ, ລະບອບ-ລະບຽບ ກ່ຽວກັບວຽກງານແຜນການ, ການລົງທຶນ ແລະ ສະຖິຕິ;
- ຄົ້ນຄວ້າ, ສັງລວມ, ສະຫຼຸບ ແລະ ລາຍງານ ການສ້າງແຜນງົບປະມານ, ແຜນຈັດສັນ, ໂຄງການຊ່ວຍເຫຼືອເພື່ອການພັດທະນາຂອງສາກົນ ແລະ ແບ່ງປັນງົບປະມານໃຫ້ບັນດາການຈັດຕັ້ງຕ່າງໆ ທີ່ຂຶ້ນກັບພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ໂດຍປະສານກັບພະແນກການເງິນ ເພື່ອສະເໜີຂັ້ນເທິງພິຈາລະນາ ພ້ອມທັງ ຊຸກຍູ້, ຕິດຕາມ, ກວດກາການຈັດຕັ້ງປະຕິບັດ ແລະ ການນໍາໃຊ້ງົບປະມານການຊ່ວຍເຫຼືອໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
- ປະສານສົມທົບກັບພະແນກແຜນການ ແລະ ການລົງທຶນ ແລະ ອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ ເພື່ອສະຫຼຸບ ແລະລາຍງານ ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ແລະ ການຊ່ວຍເຫຼືອທາງການເພື່ອການພັດທະນາ;
- ຄຸ້ມຄອງການລົງທຶນຂອງລັດ, ການຊ່ວຍເຫຼືອທາງການເພື່ອການພັດທະນາຈາກໂຄງການ ແລະ ຄູ່ຮ່ວມພັດທະນາ ໃນບັນດາການຈັດຕັ້ງຕ່າງໆ ພ້ອມທັງ ແນະນໍາ, ກວດກາການຄຸ້ມຄອງ ແລະ ນໍາໃຊ້ໃຫ້ຖືກຕ້ອງຕາມລະບຽບການ;



สแกนด้วย CamScanner

- ເກັບກຳ, ສັງລວມຂໍ້ມູນສະຖິຕິ ເຂົ້າໃນລະບົບຖານຂໍ້ມູນ ຂອງຂະແໜງສາທາລະນະສຸກ ພ້ອມທັງ ຊຸກຍູ້, ຕິດຕາມ, ກວດກາ ແລະ ສະຫຼຸບລາຍງານສະຖິຕິຂອງການຈັດຕັ້ງປະຕິບັດວຽກງານຂອງຫົວໜ່ວຍວິຊາການ ໃນແຕ່ລະໄລຍະ;
- ສັງລວມແຜນການລົງທຶນ, ແຜນການຮ່ວມມື ປະຈຳ 3 ເດືອນ, 6 ເດືອນ, 9 ເດືອນ, ປີ ແລະ 5 ປີ;
- ຕິດຕາມ ແລະ ຈັດຕັ້ງປະຕິບັດ ແຜນງານ, ແຜນການ, ໂຄງການດ້ານການເງິນສາທາລະນະສຸກ, ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ, ລະບຽບການດ້ານງົບປະມານ, ການເງິນ-ການບັນຊີ, ບັນຊີສາທາລະນະສຸກແຫ່ງຊາດ;
- ປະຕິບັດກົນໄກຄຸ້ມຄອງການເງິນລວມສູນ, ຄຸ້ມຄອງການເງິນຕາມສາຍຕັ້ງ, ການບັນຊີ, ການກວດກາການເງິນ;
- ກວດກາເຕັກນິກການອອກແບບກໍ່ສ້າງ-ສ້ອມແປງ, ການຄຸ້ມຄອງຊັບສິນ, ການປະມູນຈັດຊື້-ຈັດຈ້າງ ແລະ ການບໍລິການ ຈາກທຸກແຫຼ່ງທຶນຂອງທຸກພາກສ່ວນຂຶ້ນກັບພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ;
- ຄຸ້ມຄອງລາຍຮັບ-ລາຍຈ່າຍ, ຈັດສັນ-ແບ່ງປັນງົບປະມານ ທີ່ໄດ້ຮັບຈາກ ການອະນຸມັດ ແຕ່ລະພາກສ່ວນ ຕາມລະບຽບການ;
- ຕິດຕາມການນຳໃຊ້ງົບປະມານຕາມການຈັດສັນຂອງໂຮງໝໍແຂວງ, ວິທະຍາໄລວິທະຍາສາດ ສຸຂະພາບ, ໂຮງຮຽນສາທາລະນະສຸກ, ຫ້ອງການສາທາລະນະສຸກ, ໂຮງໝໍຊຸມຊົນ ແລະ ໂຮງໝໍນ້ອຍ ຕາມລະບຽບການ;
- ຊີ້ນຳ, ຕິດຕາມ, ຊຸກຍູ້, ກວດກາ ແລະ ປະເມີນ ການປະຕິບັດລະບຽບການດ້ານລາຍຮັບ-ລາຍຈ່າຍ ງົບປະມານ ຈາກທຸກແຫຼ່ງທຶນຂອງທຸກພາກສ່ວນ;
- ກວດຜ່ານບັນດາເອກະສານທີ່ພົວພັນເຖິງລະບຽບການທາງດ້ານການເງິນ ກ່ອນຂໍພິຈາລະນາອະນຸມັດ;
- ປະສານສົມທົບກັບບັນດາໂຮງໝໍແຂວງ, ວິທະຍາໄລວິທະຍາສາດສຸຂະພາບ, ໂຮງຮຽນສາທາລະນະສຸກ, ຫ້ອງການສາທາລະນະສຸກ, ໂຮງໝໍຊຸມຊົນ ແລະ ໂຮງໝໍນ້ອຍ ກ່ຽວກັບການປະຕິບັດກົດໝາຍ ແລະ ລະບຽບ ການດ້ານງົບປະມານ, ການເງິນ-ການບັນຊີ ແລະ ຄຸ້ມຄອງ ສະຫຼຸບລາຍຮັບ-ລາຍຈ່າຍ ການເງິນຈາກ ທຸກແຫຼ່ງທຶນ ເພື່ອລາຍງານໃຫ້ສາຍຕັ້ງ ແລະ ສາຍຂວາງ ຕາມລະບຽບການ;
- ສ້າງຄວາມເຂັ້ມແຂງທາງດ້ານວຽກງານບັນຊີສາທາລະນະສຸກແຫ່ງຊາດ, ການຄຸ້ມຄອງງົບປະມານ, ການເງິນ-ການບັນຊີ, ຄຸ້ມຄອງ ແລະ ຂຶ້ນບັນຊີຊັບສິນຂອງລັດ, ຄຸ້ມຄອງເຄື່ອງນຳເຂົ້າ, ປະມູນຈັດຊື້-ຈັດຈ້າງ ແລະ ການອອກແບບກໍ່ສ້າງ-ສ້ອມແປງໃຫ້ຜູ້ບໍລິຫານ ແລະ ວິຊາການ ຂັ້ນຕ່າງໆ ຂອງທຸກພາກສ່ວນ ຕາມລະບຽບການ;
- ສະຫຼຸບ ແລະ ສັງລວມວຽກງານການເງິນ, ສູນໂມງ, ຂາດຕົວ ແລະ ສົມທຽບບັນຊີການຈັດຕັ້ງປະຕິບັດວຽກງານການເງິນທ້າຍປີ;
- ອຳນວຍຄວາມສະດວກ ແລະ ເຂົ້າຮ່ວມການກວດສອບບັນຊີການເງິນຮ່ວມກັບພະແນກການເງິນ ແຂວງ, ນະຄອນຫຼວງ ແລະ ອົງການກວດສອບອື່ນໆ ຕໍ່ຫົວໜ່ວຍການເງິນຂອງ ທຸກພາກສ່ວນ;
- ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານແຜນການ, ການລົງທຶນ, ສະຖິຕິ ພາຍໃນແຂວງ, ນະຄອນຫຼວງ ໃຫ້ຖືກຕ້ອງ ແລະ ທັນເວລາ ພ້ອມທັງ ສະຫຼຸບ ແລະ ລາຍງານໃຫ້ຂັ້ນເທິງຕາມເວລາທີ່ໄດ້ກຳນົດໄວ້.

11. ຄົ້ນຄວ້າ, ສັງລວມ, ຕິດຕາມ, ເກັບກຳສະພາບການພົ້ນເດັ່ນ ການຈັດຕັ້ງປະຕິບັດວຽກງານ ແລະ ແຜນວຽກຈຸດສຸມຂອງບັນດາຂະແໜງ ແລະ ຫ້ອງການສາທາລະນະສຸກເມືອງ ເພື່ອສະຫຼຸບ, ສັງລວມ ແລະ ລາຍງານ ຂັ້ນເທິງ;
12. ຮັບຜິດຊອບວຽກພິທີການ ແລະ ຮັບແຂກ, ປະສານງານ ແລະ ອຳນວຍຄວາມສະດວກໃຫ້ແກ່ບັນດາ ຂະແໜງ ທີ່ຂຶ້ນກັບພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ໃນການຈັດຕັ້ງປະຕິບັດວຽກງານ;
13. ຊຸກຍູ້, ຕິດຕາມ, ສັງລວມ ແລະ ລາຍງານການຈັດຕັ້ງປະຕິບັດນິຕິກຳຕ່າງໆ ຂອງວຽກງານສາທາລະນະສຸກ ພາຍໃນແຂວງ, ນະຄອນຫຼວງ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ;
14. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການກະກຽມເຊັນ ສັນຍາບົດບັນທຶກຊ່ວຍຈຳໃນຂອບເຂດການຮ່ວມມືກັບຕ່າງປະເທດພາຍໃນແຂວງ, ນະຄອນຫລວງ ເພື່ອນຳສະ ເໜີຂັ້ນເທິງພິຈາລະນະອະນຸມັດຕາມລະບຽບການ;
15. ຄຸ້ມຄອງເອກະສານ, ເອກະສານຂາເຂົ້າ-ຂາອອກ, ສຳເນົາ, ຈັດພິມ ແລະ ຈັດສົ່ງເອກະສານຕ່າງໆ;



สแกนด้วย CamScanner

16. ຕິດຕາມການນຳໃຊ້ງົບປະມານຕາມການຈັດສັນ, ຂຶ້ນແຜນການຈັດຊື້-ຈັດຈ້າງ, ແຈກຢາຍວັດຖຸອຸປະກອນຮັບ ໃຊ້ໃຫ້ແກ່ບັນດາຂະແໜງການອ້ອມຂ້າງ ຕາມລະບຽບຫຼັກການ;
17. ຄຸ້ມຄອງ ແລະ ຂຶ້ນແຜນປັບປຸງ ຊັບສິນຂອງລັດ ທັງສັງຫາລິມມະຊັບ ແລະ ອະສັງຫາລິມມະຊັບ ເປັນຕົ້ນ ທີ່ດິນ, ເຄຫາສະຖານ, ພາຫະນະ, ເຄື່ອງໄຟຟ້າ, ນ້ຳປະປາ, ໂທລະສັບ ແລະ ວັດຖຸອຸປະກອນຕ່າງໆ;
18. ສ້າງແຜນການ, ສະຫຼຸບ, ສັງລວມ ແລະ ລາຍງານການເຄື່ອນໄຫວວຽກງານຂອງພະແນກ ປະຈຳເດືອນ ໂດຍສົມທົບກັບຂະແໜງການທີ່ກ່ຽວຂ້ອງ;
19. ຄົ້ນຄວ້າ, ສັງລວມ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະສານງານ ກ່ຽວກັບ ວຽກງານໂຄສະນາສຸຂະສຶກສາ, ວຽກງານປະຕິຮູບສາທາລະນະສຸກ, ວຽກງານສາມສ້າງ, ວຽກງານສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ໄພພິບັດ ພາຍໃນແຂວງ, ນະຄອນຫຼວງ;
20. ປະຕິບັດວຽກງານປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບ ແລະ ຄວາມສະອາດຂອງສຳນັກງານ.
21. ຈັດກອງປະຊຸມສຳມະນາ, ປຶກສາຫາລືແລກປ່ຽນຄວາມຄິດເຫັນ ກ່ຽວກັບ ວຽກງານສາທາລະນະສຸກ ພາຍໃນແຂວງ, ນະຄອນຫຼວງ ຕາມການອະນຸມັດ;
22. ພົວພັນ, ຮ່ວມມືກັບອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອປັບປຸງວຽກງານສາທາລະນະສຸກ ພາຍໃນແຂວງ, ນະຄອນຫຼວງ ຕາມຂອບເຂດ ແລະ ການມອບໝາຍ;
23. ສະຫຼຸບ, ລາຍງານ ແລະ ຕີລາຄາປະເມີນຜົນ ກ່ຽວກັບ ການປະຕິບັດວຽກງານຂອງພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ໃຫ້ແກ່ອົງການປົກຄອງແຂວງ, ນະຄອນຫຼວງ ແລະ ກະຊວງສາທາລະນະສຸກ ເພື່ອຊາບ ແລະ ໃຫ້ທິດຊີ້ນຳ;
24. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ ຫຼື ຕາມກົດໝາຍ ແລະ ລະບຽບການກຳນົດ.

**ມາດຕາ 4 ຂອບເຂດສິດ**

1. ອອກທະບຽນ ວິຊາຊີບເພສັດຊະກຳ ຮ້ານຂາຍຍ່ອຍຢາ ຂັ້ນ 3 ແລະ ຕໍ່ທະບຽນ ວິຊາຊີບເພສັດຊະກຳ ຮ້ານຂາຍຍ່ອຍຢາ ຂັ້ນ 1, ຂັ້ນ 2, ຂັ້ນ 3 ແລະ ຕໍ່ໃບອະນຸຍາດສ້າງຕັ້ງ ຫ້ອງກວດພະຍາດເອກະຊົນ ຂັ້ນ 3 ຕາມລະບຽບການທີ່ກຳນົດໄວ້;
2. ນຳສະເໜີ ກະຊວງສາທາລະນະສຸກ ກ່ຽວກັບ ການສ້າງຕັ້ງ ຫຼື ຍຸບເລີກ ທະບຽນວິສາຫະກິດເພສັດຊະກຳ ຮ້ານຂາຍຢາ, ໂຮງງານຜະລິດຢາ ແລະ ຜະລິດຕະພັນການແພດ, ບໍລິສັດ ຫຼື ສາຂາ, ໂຮງໝໍເອກະຊົນ, ຫ້ອງກວດພະຍາດເອກະຊົນ;
3. ອະນຸຍາດນຳເຂົ້າອາຫານ, ຜະລິດຕະພັນອາຫານ ຕາມການມອບໝາຍ ແລະ ບັນຊີລາຍການທີ່ໄດ້ກຳນົດໄວ້;
4. ນຳສະເໜີກະຊວງສາທາລະນະສຸກ ກ່ຽວກັບ ການຂຸດຄົ້ນຊັບພະຍາກອນທຳມະຊາດທີ່ເປັນຢາ;
5. ຄຸ້ມຄອງ ແລະ ນຳໃຊ້ ລາຍຮັບວິຊາການ, ຄ່າທຳນຽມ ແລະ ຄ່າບໍລິການ ຈາກການຕໍ່ທະບຽນວິຊາຊີບເພສັດຊະກຳຮ້ານຂາຍຍ່ອຍຢາ ຂັ້ນ 1, ຂັ້ນ 2 ແລະ ຂັ້ນ 3 ແລະ ຕໍ່ໃບອະນຸຍາດສ້າງຕັ້ງ ຫ້ອງກວດພະຍາດເອກະຊົນ ຂັ້ນ 3;
6. ອອກຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ, ລະບຽບການຕ່າງໆ ກ່ຽວກັບ ວຽກງານສາທາລະນະສຸກ ຢູ່ໃນແຂວງ ທີ່ບໍ່ຂັດກັບລະບຽບກົດໝາຍ ແລະ ຕາມພາລະບົດບາດຂອງພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ;
7. ສັບຊ້ອນ, ໝູນວຽນ ພະນັກງານ-ລັດຖະກອນ ພາຍໃນພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ໃຫ້ສອດຄ່ອງຕາມມາດຕະຖານທີ່ກຳນົດໄວ້;
8. ລົງລາຍເຊັນບົດບັນທຶກຊ່ວຍຈຳ ໃນຂອບເຂດການຮ່ວມມືກັບຕ່າງປະເທດ ພາຍໃນແຂວງ, ນະຄອນຫຼວງ ຕາມການອະນຸມັດຂອງຂັ້ນເທິງ;
9. ເຂົ້າພົບຄະນະນຳຂອງແຂວງ, ນະຄອນຫຼວງ ແລະ ກະຊວງສາທາລະນະສຸກ, ປະສານສົມທົບກັບບັນດາພະແນກການຕ່າງໆ ອ້ອມຂ້າງແຂວງ, ນະຄອນຫຼວງ ເພື່ອປຶກສາຫາລືວຽກງານຕ່າງໆ ທີ່ມີຄວາມຈຳເປັນ;
10. ສະເໜີຄະນະນຳຂອງແຂວງ ແລະ ກະຊວງສາທາລະນະສຸກ ໃນການປັບປຸງກົງຈັກການຈັດຕັ້ງຂອງພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ໃຫ້ມີຄວາມເໝາະສົມກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ;



สแกนด้วย CamScanner

11. ນຳໃຊ້ງົບປະມານຕາມແຜນອະນຸມັດ, ພາຫະນະ, ພື້ນຖານໂຄງລ່າງເຄຫາສະຖານ, ທີ່ດິນ ແລະ ວັດຖຸອຸປະກອນ ຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານວິຊາການສະເພາະຢ່າງມີປະສິດທິຜົນ ຕາມລະບຽບກົດໝາຍ;
12. ຮຽກໂຮມພະນັກງານນຳພາ-ຄຸ້ມຄອງ ແລະ ວິຊາການສາທາລະນະສຸກຂັ້ນຕ່າງໆ ພາຍໃນແຂວງ, ນະຄອນຫຼວງ ມາປະຊຸມສ່ອງແສງ, ປຶກສາຫາລື, ສະຫຼຸບຕີລາຄາ, ສຳຫຼວດກວດກາ, ຖອດຖອນບົດຮຽນຈັດສຳມະນາ ຄົ້ນຄວ້າວິທະຍາສາດ ແລະ ວາງທິດທາງ ແຜນການໃນຕໍ່ໜ້າ ກ່ຽວກັບ ວຽກງານສາທາລະນະສຸກ ພາຍໃນ ແຂວງ, ນະຄອນຫຼວງ ເປັນແຕ່ລະໄລຍະ;
13. ເຂົ້າຮ່ວມກອງປະຊຸມ ແລະ ປະກອບຄຳເຫັນຕໍ່ແຜນການເຄື່ອນໄຫວວຽກງານຂອງກະຊວງສາທາລະນະສຸກ ແລະ ພົວພັນກັບຂະແໜງການອື່ນ ທີ່ກ່ຽວຂ້ອງຕາມການມອບໝາຍ.
14. ປະຕິບັດສິດອື່ນ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ໂຄງປະກອບກົງຈັກການຈັດຕັ້ງ ຂອງພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ແມ່ນຂຶ້ນກັບການຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ອີງໃສ່ສະພາບຈຸດພິເສດ ຂອງແຕ່ລະທ້ອງຖິ່ນ ບົນພື້ນຖານຫຼັກກົງຈັກກະທັດຮັດ, ໜັກແໜ້ນ, ເຂັ້ມແຂງ, ເຄື່ອນໄຫວມີປະສິດທິພາບ, ປະສິດທິຜົນ ແລະ ການເຫັນດີ ເປັນເອກະພາບກັບກະຊວງສາທາລະນະສຸກ.

ນອກຈາກນັ້ນ ຍັງປະກອບມີ ໂຮງໝໍພາກ, ໂຮງໝໍແຂວງ, ວິທະຍາໄລ ວິທະຍາສາດ ສຸຂະພາບ, ໂຮງຮຽນສາທາລະນະສຸກ, ສູນຝຶກອົບຮົມ ແລະ ສາຂາສູນການແພດຟື້ນຟູໜ້າທີ່ການ ທີ່ຢູ່ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວສະເພາະ ແລະ ພາຍໃຕ້ການຄຸ້ມຄອງຂອງ ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ.

### ມາດຕາ 6 ໂຄງປະກອບດ້ານບຸກຄະລາກອນ

ໂຄງປະກອບບຸກຄະລາກອນຂອງພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ປະກອບດ້ວຍ:

1. ຫົວໜ້າພະແນກ 01 ທ່ານ, ເປັນຜູ້ຮັບຜິດຊອບໂດຍກົງ ແລະ ຮອບດ້ານຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ລັດຖະມົນຕີ ກະຊວງສາທາລະນະສຸກ ໃນການຄຸ້ມຄອງຕາມຂະແໜງການຕົນຮັບຜິດຊອບ ຊຶ່ງມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້, ຫົວໜ້າພະແນກ ໄດ້ຮັບເງິນອຸດໜູນຕຳແໜ່ງບໍລິຫານ ປະເພດ 3 ຕາມດຳລັດ ສະບັບເລກທີ /203ນຍ , ລົງວັນທີ 04ກໍລະກົດ 2017.

   ໃນກໍລະນີຕິດຂັດ ຫົວໜ້າພະແນກ ຕ້ອງມອບສິດ ໃຫ້ຮອງຫົວໜ້າພະແນກ ທ່ານໃດໜຶ່ງເປັນຜູ້ຮັກສາການແທນ.
2. ຮອງຫົວໜ້າພະແນກ ຈຳນວນໜຶ່ງ ຊ່ວຍຫົວໜ້າພະແນກໃນການຊີ້ນຳວຽກງານຂອງຕົນ, ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງຫົວໜ້າພະແນກ, ຮອງຫົວໜ້າພະແນກ ໄດ້ຮັບເງິນອຸດໜູນຕຳແໜ່ງບໍລິຫານ ປະເພດ 4 ຕາມດຳລັດ ສະບັບເລກທີ /203ນຍ ,ລົງວັນທີ 04ກໍລະກົດ 2017.

   ຮອງຫົວໜ້າພະແນກສາທາລະນະສຸກຜູ້ຮັກສາການແທນຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຮັກສາການແທນນັ້ນໃຫ້ຫົວໜ້າພະແນກຊາບ ພາຍຫຼັງກັບມາປະຈຳການ.

3. ຫົວໜ້າຂະແໜງ, ຮອງຂະແໜງ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ ຫົວໜ້າຂະແໜງ ແລະ ຮອງຫົວໜ້າຂະແໜງ ໄດ້ຮັບເງິນອຸດໜູນຕຳແໜ່ງບໍລິຫານ ປະເພດ 5 ແລະ 6 ຕາມດຳລັດ ສະບັບເລກທີ /203ນຍ , ລົງວັນທີ 04ກໍລະກົດ 2017.

   ສຳລັບການບັນຈຸ, ຊັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້.



สแกนด้วย CamScanner

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7 ຫຼັກການ**

ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ ໂດຍສົມທົບລະຫວ່າງຄວາມຮັບຜິດຊອບ ຂອງໝູ່ຄະນະກັບການຍົກສູງຄວາມຮັບຜິດຊອບຂອງບຸກຄົນ;
2. ປະຕິບັດລະບອບຫົວໜ້າດຽວ, ຕາມການແບ່ງຂັ້ນຄຸ້ມຄອງ ແລະ ບົນພື້ນຖານມີການແບ່ງງານກັນຢ່າງຈະແຈ້ງໃນໝູ່ຄະນະ ແລະ ທຸກຂັ້ນ;
3. ທຸກການເຄື່ອນໄຫວຂອງວຽກງານ ແມ່ນອີງໃສ່ແນວທາງນະໂຍບາຍ ຂອງພັກ, ລັດ, ກົດໝາຍ ແລະ ລະບຽບການ.

**ມາດຕາ 8 ແບບແຜນວິທີເຮັດວຽກ**

ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ມີແບບແຜນ ແລະ ວິທີເຮັດວຽກ ດັ່ງນີ້:

1. ທຸກການເຄື່ອນໄຫວວຽກງານຂອງພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ແມ່ນອີງໃສ່ຫຼັກການ ແລະ ລະບຽບການຂອງ ແຂວງ/ນະຄອນຫຼວງ ແລະ ກະຊວງສາທາລະນະສຸກ;
2. ເຮັດວຽກຢ່າງມີແຜນການ, ແຜນງານ ແລະ ໂຄງການລະອຽດ;
3. ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຢ່າງແໜ້ນແຟ້ນ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;
4. ປະຕິບັດລະບອບປະຊຸມ, ສ່ອງແສງ, ລາຍງານປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ແລະ ກອງປະຊຸມວິຊາການຕ່າງໆ ເພື່ອຊຸກຍູ້ຕິດຕາມ ແລະ ກວດກາ, ການເກັບກຳສະພາບລວມ ແລະ ສະເພາະດ້ານຈາກທຸກຂົງເຂດວຽກງານ ແລະ ສັງລວມລາຍງານໃຫ້ເຈົ້າແຂວງ/ເຈົ້າຄອງນະຄອນຫຼວງ ແລະ ລັດຖະມົນຕີກະຊວງສາທາລະນະສຸກ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ ແລະ ຕາປະທັບ**

ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ມີງົບປະມານ ແລະ ຕາປະທັບຂອງຕົນ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກຳນົດ.

**ມາດຕາ 10 ການຈັດຕັ້ງປະຕິບັດ**

ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ, ບັນດາພະແນກການຕ່າງໆ ອ້ອມຂ້າງແຂວງ, ນະຄອນຫຼວງ, ສະຖາບັນການສຶກສາ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 11 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ສະບັບເລກທີ 0454/ສທ, ລົງວັນທີ 11 ມີນາ 2019 ແລະ ທຸກຂໍ້ຕົກລົງໃນເມື່ອກ່ອນທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີ

ປອ.ດຣ. ບຸນແຝງ ພູມມະໄລສິດ



สแกนด้วย CamScanner